ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳແລະການຄ້າ

ຫ້ອງການ

ເລກທີ 1964 /ຫອຄ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2017

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ, ບັນດາພາກສ່ວນຕ່າງໆ ໃນຂອບເຂດທົ່ວປະເທດ

ເລື່ອງ: ໂຈະຊົ່ວຄາວ ການຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດດ້ານການບໍລິການໃຫ້ຄຳປຶກສາຕ່າງໆ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 1142/ຫສນຍ.ກຄສ, ລົງວັນທີ 2 ສິງຫາ 2017.

ເພື່ອແກ້ໄຂສະພາບ ແລະ ສະກັດກັ້ນຜົນເສຍຫາຍ ທີ່ເກີດຈາກການສວຍໃຊ້ທະບຽນວິສາຫະກິດໃນທຸລະກິດດ້ານການບໍລິການໃຫ້ຄຳປຶກສາ ໂດຍບໍ່ສອດຄ່ອງກັບວັດຖຸປະສົງດັ່ງທີ່ກຳລັງເກີດຂຶ້ນ ແລະ ແຜ່ຫຼາຍໃນປະຈຸບັນ, ຫ້ອງການ, ກະຊວງອຸດສາຫະກຳແລະການຄ້າ ແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ແລະ ບັນດາພາກສ່ວນຕ່າງໆ ຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ດັ່ງນີ້:

1. ໂຈະຊົ່ວຄາວ ການຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດກ່ຽວກັບກິດຈະການບໍລິການໃຫ້ຄຳປຶກສາດ້ານຕ່າງໆ (ທັງໝົດ) ເວັ້ນເສຍແຕ່ ກໍລະນີທີ່ກະຊວງກ່ຽວຂ້ອງຫາກເຫັນວ່າມີຄວາມຈຳເປັນ ແລະ ມີໜັງສືສະເໜີໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອສ້າງຕັ້ງວິສາຫະກິດທີ່ປຶກສາໃດໜຶ່ງເປັນການສະເພາະ;

2. ການໂຈະຊົ່ວຄາວຕາມແຈ້ງການສະບັບນີ້ ໃຫ້ມີຜົນແຕ່ວັນທີ 1 ກັນຍາ 2017 ເປັນຕົ້ນໄປ ຈົນກວ່າຈະມີແຈ້ງການເປັນຢ່າງອື່ນ;

3. ໃນໄລຍະໂຈະຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຊົ່ວຄາວ ດັ່ງທີ່ກ່າວມາ ໃນຂໍ້ 1 ເທິງນີ້ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ທົ່ວປະເທດ ຮ່ວມກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈັດຕັ້ງຄະນະ ຫຼື ໜ່ວຍງານ ເພື່ອດຳເນີນການກວດກາ ປະເມີນຜົນ ແລະ ປະຕິບັດມາດຕະການຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 1142/ຫສນຍ.ກຄສ, ລົງວັນທີ 2 ສິງຫາ 2017;

4. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ລາຍງານສະພາບ ແລະ ຜົນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຊາບ ແລະ ຊີ້ນຳໃນແຕ່ລະໄລຍະ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ໄມ

ຫົວໜ້າຫ້ອງການ

ນ.ບານສະຕິ ເທບພະວົງ

Scanned by CamScanner